ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

015

ແຂວງບໍລິຄຳໄຊ

ເລກທີ...............015/ຂບຊ

ບໍລິຄຳໄຊ, ວັນທີ...17 AUG 2015...

# ຄຳສັ່ງແນະນຳ
# ຂອງເຈົ້າແຂວງ-ແຂວງບໍລິຄຳໄຊ
# ກ່ຽວກັບການຄຸ້ມຄອງສາຍສົ່ງໄຟຟ້າແຮງສູງ.

**ເຖິງ:** ເຈົ້າເມືອງ 7 ຕົວເມືອງ, ພະແນກການ, ກອງບັນຊາການ ປກຊ-ປກສ, ຫ້ອງການ, ອົງການຈັດຕັ້ງມະຫາຊົນ ແລະ ລັດວິສາຫະກິດ, ບໍລິສັດ ຕະຫຼອດຮອດປະຊາຊົນບັນດາເຜົ່າພາຍໃນແຂວງບໍລິຄຳໄຊ.

**ເລື່ອງ:** ການສະກັດກັ້ນກຸ່ມຄົນບໍ່ດີທີ່ລັກອຸປະກອນສາຍໄຟຟ້າແຮງສູງ ແລະ ຫ້າມບໍ່ໃຫ້ປູກຕົ້ນໄມ້, ສິ່ງປຸກສ້າງຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ໃນຂົງເຂດ ແຂວງບໍລິຄຳໄຊ.

- ອີງຕາມ ແຈ້ງການ ຂອງລັດວິສາຫະກິດໄຟຟ້າລາວ, ສະບັບເລກທີ 0308/ຟຟລ, ລົງວັນທີ 25 ມັງກອນ 2013.

ເນື່ອງຈາກວ່າໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງ ໄດ້ລັກເອົາຊິ້ນສ່ວນອຸປະກອນຂອງເສົາໄຟຟ້າແຮງສູງ ເຊິ່ງເປັນຊັບສິນຂອງຊາດ ທີ່ຜ່ານມາເສຍຫາຍເປັນຈຳນວນຫຼວງຫຼາຍ ອັນເຮັດໃຫ້ເສຍງົບປະມານໃນການສ້ອມແປງບຳລຸງຮັກສາໄປແລ້ວນັ້ນບໍ່ແມ່ນໜ້ອຍ ແລະ ມີບາງຂົງເຂດຍັງມີຕົ້ນໄມ້ອຸດສາຫະກຳທີ່ໃຫຍ່ຢູ່ກ້ອງສາຍສົ່ງໄຟຟ້າແຮງສູງ ເຊິ່ງກໍ່ໃຫ້ເກີດບັນຫາໄຟຕົກໄຟມອດ, ມີການສູນເສຍ ພະລັງງານ ແລະ ຄັດກັບເຕັກນິກຂອງ ໄຟຟ້າລາວ ເຮັດໃຫ້ທາງຫ້ອງການລະບົບສົ່ງໄຟຟ້າພາກກາງ2 ພົບຄວາມຫຍຸ້ງຍາກໃນການຄຸ້ມຄອງຕິດຕາມກວດກາ, ສະນັ້ນ ຢາກໃຫ້ທຸກພາກສ່ວນເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການສະກັດກັ້ນຢຸດຢັ້ງກຸ່ມຄົນບໍ່ດີ ທີ່ລັກເອົາອຸປະກອນເສົາໄຟຟ້າແຮງສູງ ແລະ ບັນຫາຕົ້ນໄມ້ໃຫຍ່ຢູ່ກ້ອງສາຍສົ່ງໃຫ້ທັນການ.

## ເຈົ້າແຂວງ-ແຂວງບໍລິຄຳໄຊ ອອກຄຳສັ່ງ ແນະນຳ ດັ່ງນີ້:

1. ໃຫ້ທຸກພາກສ່ວນແຕ່ແຂວງຈົນຮອດທ້ອງຖິ່ນ ຮ່ວມມືກັນໃນການຕິດຕາມກຸ່ມຄົນບໍ່ດີ ລັກອຸປະກອນສາຍສົ່ງໄຟຟ້າແຮງສູງ ຖ້າຫາກພົບເຫັນແມ່ນໃຫ້ລາຍງານຕໍ່ຄະນະກຳມະການສະເພາະກິດ, ເຈົ້າໜ້າທີ່ ຫຼື ອຳນາດການປົກຄອງບ້ານເພື່ອຈັບຕົວຜູ້ກ່ຽວມາດຳເນີນການ ຕາມລະບຽບກົດໝາຍ.
2. ໃຫ້ທຸກພາກສ່ວນແຕ່ແຂວງຈົນຮອດທ້ອງຖິ່ນ ຖ້າຫາກພົບເຫັນບຸກຄົນ, ກຸ່ມຄົນບໍ່ດີ ແລະ ບັນດາຮ້ານເກັບຊື້ເຫຼັກເສດ ມີອຸປະກອນສາຍສົ່ງໄຟຟ້າແຮງສູງມາຄອບຄອງ ແມ່ນໃຫ້ລາຍງານຕໍ່ ຄະນະກຳມະການ ສະເພາະກິດ ເຈົ້າໜ້າທີ່ ຫຼື ອຳນາດການປົກຄອງບ້ານທາງໂທລະສັບ ຫຼື ເອກະສານໜັງສືສະເໜີເພື່ອເປັນບ່ອນອີງໃນການກວດກາ, ກວດຄົ້ນ ແລະ ຈັບກຸມຕົວມາດຳເນີນການຕາມລະບຽບກົດໝາຍ.
3. ໃຫ້ເຈົ້າເມືອງແຕ່ລະເມືອງ ອອກຄຳສັ່ງແນະນຳ ໃຫ້ແຕ່ລະບ້ານ ແລະ ແຕ່ລະກົມກອງພາຍໃນເມືອງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ຮັບຊາບ ແລະ ໃຫ້ຄວາມຮ່ວມມືດັ່ງນີ້:

3.1 ແຕ່ງຕັ້ງຄະນະກຳມະການສະເພາະກິດຂັ້ນເມືອງ ແລະ ຂັ້ນບ້ານທີ່ມີຕາຂ່າຍໄຟຟ້າແຮງສູງຜ່ານໂດຍປະກອບມີ ພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ບ້ານເປັນເຈົ້າການ ໃນການຕິດຕາມກວດກາ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ເພື່ອລາຍງານ ຕໍ່ເມືອງ ແລະ ຄະນະກຳມະການສະເພາະກິດຂັ້ນແຂວງ.

3.2 ແຈ້ງໃຫ້ນາຍບ້ານທຸກໆບ້ານຮັບຊາບ ເພື່ອຕິດຕາມ - ກວດກາການເຄື່ອນໄຫວຂອງກຸ່ມຄົນບໍ່ດີ ຖ້າຫາກພົບເຫັນກຸ່ມເປົ້າໝາຍແມ່ນໃຫ້ລາຍງານພາກສ່ວນທີ່ກ່ຽວຂ້ອງຮັບຊາບ ເພື່ອຈັບຕົວມາດຳເນີນຄະດີຕາມລະບຽບກົດໝາຍ.

3.3 ແຈ້ງໃຫ້ບ້ານເອົາໃຈໃສ່ກວດກາ-ຕິດຕາມ ເບິ່ງບັນດາຮ້ານທີ່ເກັບຊື້ເຫຼັກເສດຕ່າງໆ ວ່າມີການເກັບຊື້ອຸປະກອນເສົາໄຟຟ້າແຮງສູງບໍ່ ແລ້ວລາຍງານໃຫ້ຄະນະກຳມະການສະເພາະກິດຂັ້ນເມືອງ, ແຂວງ ຫຼື ພາກສ່ວນທີ່ກ່ຽວຂ້ອງເພື່ອປະຕິບັດຕາມລະບຽບກົດໝາຍ.

3.4 ແຈ້ງໃຫ້ບ້ານຮັບຊາບໃນກໍລະນີຫາກພົບເຫັນຜູ້ກະທຳຜິດແບບຕໍ່ໜ້າຕໍ່ຕາ ແມ່ນສາມາດຈັບກຸມຕົວພ້ອມຂອງກາງນຳມາມອບໃຫ້ເຈົ້າໜ້າທີ່ດຳເນີນຕາມລະບຽບກົດໝາຍ.

3.5 ໃຫ້ບ້ານແຈ້ງຕໍ່ພໍ່ແມ່ປະຊາຊົນພາຍໃນບ້ານຮັບຊາບ ຫ້າມບໍ່ໃຫ້ປຸກສິ່ງປຸກສ້າງ ແລະ ປູກຕົ້ນໄມ້ໃຫຍ່ໃສ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ເປັນຕົ້ນແມ່ນ: ຕົ້ນຢາງພາລາ, ໄມ້ເກດສະໜາ, ໄມ້ສັກ ແລະ ອື່ນໆ ທີ່ຂັດຕໍ່ມາດຕະຖານເຕັກນິກໄຟຟ້າລາວ ຢູ່ກ້ອງແລວສາຍສົ່ງເດັດຂາດ. ນອກຈາກຈະເປັນພຶດອາຍຸສັ້ນ ແລະ ຫາກບຸກຄົນໃດຫາກລະເມີດແມ່ນຈະບໍ່ມີຄ່າຊົດເຊີຍແຕ່ຢ່າງໃດເລີຍ.

3.6 ໃຫ້ຂະແໜງຄຸ້ມຄອງສາຍສົ່ງໄຟຟ້າ ສົມທົບກັບບ້ານ ລົງກວດກາຕົວຈິງຕາມແລວສາຍສົ່ງແຮງສູງ ຖ້າຫາກມີສິ່ງປຸກສ້າງທີ່ຂັດຕໍ່ມາດຕະຖານເຕັກນິກໄຟຟ້າລາວ ແມ່ນສະເໜີໃຫ້ພາກສ່ວນກ່ຽວຂ້ອງເພື່ອລະດົມຍົກຍ້າຍອອກຈາກແລວສາຍສົ່ງເພື່ອສະດວກແກ່ຜູ້ຄຸ້ມຄອງແລວສາຍສົ່ງ ເພາະສາຍສົ່ງໄຟຟ້າເປັນຂອງສ່ວນລວມ.

4. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງລະດົມ ຫ້າມບໍ່ໃຫ້ພໍ່ແມ່ປະຊາຊົນປຸກສິ່ງປຸກສ້າງທີ່ຂັດມາດຕະຖານເຕັກນິກໄຟຟ້າລາວກ້ອງສາຍສົ່ງແຮງສູງ ແລະ ລະດົມໃຫ້ຕັດຕົ້ນໄມ້ທີ່ຢູ່ກ້ອງສາຍສົ່ງແຮງສູງອອກເພື່ອຄວາມປອດໄພ ແລະ ສະດວກໃນການຕິດຕາມກວດກາຖາງແລວສາຍສົ່ງ.

5. ຫ້າມບໍ່ໃຫ້ຮ້ານເກັບ ຊື້-ຂາຍ ເຫຼັກສານເສົາໄຟຟ້າແຮງສູງຈາກກຸ່ມຄົນບໍ່ດີທີ່ລັກມາຂາຍເດັດຂາດ ຖ້າຫາກຜູ້ໃດຫາກບໍ່ປະຕິບັດຈະຖືກປັບໃໝ່ ແລະຈັບຕົວມາດຳເນີນຄະດີຕາມລະບຽບກົດໝາຍຢ່າງເຂັ້ມງວດ.

6. ໃຫ້ຄະນະກຳມະການສະເພາະກິດປະຕິບັດໜ້າທີ່ໃນການຕິດຕາມກວດກາ,ປຸກລະດົມ,ໄກ່ເກ່ຍ ບັນຫາທີ່ຄົງຄ້າງ.

7. ໃຫ້ບັນດາພະແນກ, ກົມກອງ-ອົງການທຽບເທົ່າ, ລັດວິສາຫະກິດ ແລະ ບັນດາເມືອງ ໃນທົ່ວແຂວງບໍລິຄໍາໄຊຈົ່ງຮັບຮູ້ໃຫ້ການຮ່ວມມື ແລະ ພ້ອມກັນສະກັດກັ້ນກຸ່ມຄົນບໍ່ດີດັ່ງກ່າວ ເພື່ອໃຫ້ໄດ້ຮັບໝາກຜົນ ແລະ ເປັນໄປຕາມຄາດໝາຍທີ່ວາງໄວ້.

8. ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໜ້າທີ່ຢ່າງເຂັ້ມງວດ, ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ-ແຂວງບໍລິຄໍາໄຊ**

ດຣ. ກອງແກ້ວ ໄຊສົງຄາມ

Dr. Kongkeo XAYSONGKHAM